# ເອກະສານຂໍ້ມູນຄວາມຈິງຂອງກົດລະບຽບອາຫານໝາຍເລກ 30

*ສິ່ງທີ່ທ່ານຄວນຮູ້ກ່ຽວກັບກົດລະບຽບ*

WWW.HEALTHOREGON.ORG/FOODSAFETY

## ທໍ່ດູດຢາງໃນສະຖານທີ່ບໍລິການອາຫານ

**OAR 333-150-0000, ນິຍາມ**

(1) **"ຫຼອດດູດຢາງທີ່ໃຊ້ໄດ້ເທື່ອດຽວ"** ໝາຍເຖິງທໍ່ທີ່ເຮັດຈາກຢາງທີ່ສະກັດເອົາມາຈາກນ້ຳມັນ ຫຼື ສານໂພລີເມີທີ່ມີຄວາມເປັນທຳມະຊາດ, ເຊັ່ນ ເຂົ້າສາລີ ຫຼື ວັດຖຸດິບທີ່ມາຈາກຕົ້ນໄມ້ອື່ນ, ແລະ ນັ້ນແມ່ນເພື່ອ:
(a) ສົ່ງຕໍ່ສານແຫຼວຈາກບັນຈຸພັນໄປຫາປາກຂອງລູກຄ້າ;
(b) ສຳລັບທີ່ໃຊ້ຄັ້ງດຽວ; ແລະ
(c) ຖິ້ມເລີຍພາຍຫຼັງຈາກນຳໃຊ້ຄັ້ງດຽວ.

(2) A **"ຫຼອດດູດທີ່ນຳໃຊ້ໄດ້ເທື່ອດຽວ"** ບໍ່ໄດ້ລວມເອົາ:
(a) ຫຼອດດູດທີ່ເຮັດດ້ວຍວັດສະດຸອື່ນໆທີ່ບໍ່ແມ່ນ ຢາງ, ລວມເຖິງແຕ່ບໍ່ແມ່ນສະເພາະເຈ້ຍ, ຕົ້ນອ້ອຍ, ໄມ້ ຫຼື ໄມ້ໄຜ່; ແລະ
(b) ຫຼອດຢາງທີ່ແນບມາກັບ ຫຼື ຫຸ້ມຫໍ່ມາກັບບັນຈຸພັນຂອງເຄື່ອງດື່ມທີ່ມີສຳລັບຈຳໜ່າຍ.

**OAR 333-150-0000, ພາກທີ 4-502.13(C) ຫົວບົດການບໍລິການ-ດ່ຽວ ແລະ ການນຳໃຊ້-ດ່ຽວ, ການຈຳກັດການນຳໃຊ້**

(A) ບັນຈຸພັນທີ່ນຳໃຊ້ ແລະ ບໍລິການພຽງຄັ້ງດຽວອາດຈະບໍ່ສາມາດນຳກັບມາໃຊ້ໄດ້ອີກ.

(B) ກ່ອງນົມສົດທີ່ຖິ້ມແລ້ວຕ້ອງໄດ້ຕັດມຸມອອກຫຼາຍກວ່າໜຶ່ງນິ້ວຫ່າງຈາກຫົວຖອກນົມອອກ.

(C) (1) ໃຫ້ບໍລິການ ອາຫານ ຫຼື ເຄື່ອງດື່ມ ຫຼື ຮ້ານສະດວກຊື້ອາດຈະບໍ່ມີຫຼອດດູດຢາງທີ່ໃຊ້ຄັ້ງດຽວໃຫ້ລູກຄ້າຖ້າບໍ່ໄດ້ຮັບການຂໍຫຼອດດູດຢາງທີ່ໃຊ້ຄັ້ງດຽວເປັນພິເສດ.
(2) ສະຖານທີ່ໃຫ້ບໍລິການອາຫານ ຫຼື ເຄື່ອງດື່ມອາດຈະມີຫຼອດດູດຢາງທີ່ສາມາດໃຊ້ໄດ້ຄັ້ງດຽວໃຫ້ລູກຄ້າທີ່ນັ່ງຮັບປະທານໃນຮ້ານ ຫຼື ໃນລົດ.
(3) ຮ້ານສະດວກຊື້ອາດຈະປະຫຼອດດູດທີ່ໃຊ້ຄັ້ງດຽວໄວ້ໃນສະຖານທີ່ຮ້ານບ່ອນໃດໜຶ່ງຖ້າເຂົາເຈົ້າບໍ່ມີບ່ອນທີ່ຈະວາງ.
(4) ຮ້ານສະດວກຊື້ອາດຈະຈຳໜ່າຍ ຫຼື ມີຫຼອດດູດທີ່ນຳໃຊ້ຄັ້ງດຽວໃຫ້ເປັນຊຸດ ຫຼື ທີ່ບໍ່ກ່ຽວຂ້ອງກັບການຈຳໜ່າຍ ຫຼື ໃຫ້ອາຫານ ຫຼື ເຄື່ອງດື່ມ.

ການໂຫວດຂອງສະພາ 90 ໄດ້ຜ່ານລະຫວ່າງການດຳເນີນການດ້ານກົດໝາຍປີ 2019, ທີ່ຈຳກັດຮ້ານທີ່ດຳເນີນກິດຈະການບໍລິການອາຫານໃນການແຈກຈ່າຍຫຼອດດູດຢາງໃຫ້ລູກຄ້າຖ້າບໍ່ມີການຂໍເປັນກໍລະນີພິເສດ. ພະນັກງານບໍລິການອາຫານສາມາດເອົາຫຼອດດູດຢາງທີ່ສາມາດໃຊ້ໄດ້ຄັ້ງດຽວໃຫ້ລູກຄ້າຖ້າເຂົາເຈົ້ານັ່ງກິນຢູ່ຮ້ານອາຫານ/ເທິງລົດຜ່ານປ່ອງບໍລິການຂັບຜ່ານ.

ການຈຳກັດນີ້ບໍ່ໄດ້ກ່ຽວຂ້ອງກັບສະຖານທີ່ບໍລິການສຸຂະພາບ ຫຼື ສະພານທີ່ດູແລໃນບ້ານທີ່ໃຫ້ຄົນເຈັບ ຫຼື ສະມາຊິກສາມາດໃຊ້ຫຼອດດູດໄດ້.

ຮ້ານສະດວກຊື້ອາດຈະມີຫຼອດດູດຢາງໄວ້ໃຫ້ລູກຄ້າບ່ອນທີ່ບໍ່ມີໃຜຢູ່ຖ້າຮ້ານບໍ່ມີສະຖານທີ່ພຽງພໍໃນການວາງຢູ່ບ່ອນທີ່ພະນັກງານໃຊ້ເປັນບ່ອນບໍລິການລູກຄ້າ. ຂຶ້ນກັບຜູ້ດຳເນີນການໃນການຕັດສິນໃຈວ່າຈະວາງຫຼອດດູດໄວ້ບ່ອນໃດ ແລະ ຖ້າເຂົາເຈົ້າມີພື້ນທີ່ພຽງພໍ.




*ຫຼອດດູດຕ້ອງໄດ້ຮັບການຮ້ອງຂໍໂດຍລູກຄ້າຖ້າລູກຄ້າບໍລິໂພກຢູ່ໃນລົດ*

ຂໍ້ມູນເພີ່ມເຕີມ:

- ຫຼອດດູດບໍ່ສາມາດເອົາໃສ່ໂດຍອັດຕະໂນມັດໃນຖົງອາຫານຂອງລູກຄ້າທີ່ໃຊ້ບໍລິການປ່ອງຂັບຜ່ານ
- ຫຼອດດູດນ້ອຍສຳລັບເຫຼົ້າປັ່ນແມ່ນລວມຢູ່ໃນການຈຳກັດນີ້
- ສະຖານທີ່ອາດຈະມີປ້າຍທີ່ບົ່ງບອກວ່າລູກຄ້າຕ້ອງຖາມພະນັກງານຖ້າເຂົາເຈົ້າຕ້ອງການຫຼອດດູດ
- ສະຖານທີ່ທີ່ມີການບໍລິການອອນລາຍອາດຈະໃຊ້ "ຫ້ອງຕິກເອົາ" ຫຼື ເຄື່ອງໝາຍອື່ນໆກ່ຽວກັບຫຼອດດູດ. ລູກຄ້າ (ຫຼືບໍລິການສົ່ງ) ຕ້ອງໄດ້ຂໍຫຼອດດູດຕອນທີ່ຮັບເອົາລາຍການອາຫານທີ່ສັ່ງ
- ຫຼອດດູດທີ່ສາມາດນຳໃຊ້ໄດ້ຫຼາຍຄັ້ງ, ລຽບ ແລະ ສາມາດອະນາໄມໄດ້ງ່າຍເຊັ່ນ ແກ້ວ ຫຼື ໂລຫະ ອາດຈະໄດ້ຮັບອະນຸຍາດໂດຍບໍ່ມີຂໍ້ຈຳກັດ
- ຫຼອດດູດທີ່ສາມາດນຳໃຊ້ໄດ້ຫຼາຍເທື່ອແຕ່ລະອັນຕ້ອງໄດ້ຮັບການລ້າງດ້ວຍມືໂດຍໃຊ້ແປງນ້ອຍ, ໄລ ແລະ ຂ້າເຊື້ອໃນແຕ່ລະຄັ້ງທີ່ໃຊ້
- ຫຼອດດູດທີ່ເຮັດຈາກໄມ້ໄຜ່ແມ່ນບໍ່ອະນຸຍາດຍ້ອນວ່າເປັນຫຼອດດູດທີ່ລຽບ ແລະ ສາມາດທຳຄວາມສະອາດໄດ້ງ່າຍ
- ຫຼອດດູດເຈ້ຍທີ່ສາມາດຍ່ອຍສະຫຼາຍໄດ້ຕາມທຳມະຊາດທີ່ສາມາດໃຊ້ໄດ້ເທື່ອດຽວແມ່ນອະນຸຍາດໃຫ້ໃຊ້ໂດຍບໍ່ມີຂໍ້ຈຳກັດ
- ຫຼອດດູດທີ່ເຮັດຈາກພືດ/ຢາງສັງເຄາະແມ່ນບໍ່ໄດ້ຮັບອະນຸຍາດ



Oregon Health Authority